**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ແຂວງອັດຕະປື
ພະແນກອຸດສາຫະກຳ ແລະ ການຄ້າ — ເລກທີ...24...../ອຄ.ອປ
(ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ) — ທີ່ອັດຕະປື, ວັນທີ22 ມິ.ງ 2023.

## ແຈ້ງການປະມູນ

**ຮຽນ :** ຜູ້ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສາເລັດຮູບ ທົ່ວປະເທດ.

**ເລື່ອງ :** ເຊີນເຂົ້າຮ່ວມປະມູນຊື້ໄມ້ທ່ອນໄມ້ຍຶດຂອງແຂວງຈຳນວນ 11 ບັນຊີ ເທົ່າກັບ 860 ຕົບ/ໂຕ ບໍລິມາດ 69,064 ມ3 ( ຫົກສິບເກົ້າຈຸດສູນຫົກສີ່ແມັດກ້ອນ ).

- ອີງຕາມ ຄຳສັ່ງ ເລກທີ່ 15/ນຍ, ລົງວັນທີ່ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 1548/ຈຂອປ, ລົງວັນທີ 14 ທັນວາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະ ກຳ ແລະ ການຄ້າແຂວງ.
- ອີງຕາມ ຄຳສັ່ງແນະນຳເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນຳການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ( ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບການຈັດຕັ້ງປະມູນຂາຍໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດດັ່ງນີ້:

I. **ໄມ້ຍຶດຂອງແຂວງ ທີ່ຈະປະມູນຂາຍ ມີຈຳນວນທັງໝົດ 11 ບັນຊີ ເທົ່າກັບ 860 ຕົບ/ໂຕ, ບໍລິມາດ : 69,064 ແມັດກ້ອນ ( ຫົກສິບເກົ້າຈຸດສູນຫົກສີ່ແມັດກ້ອນ ) ໃນນັ້ນ :**

- ➢ ບັນຊີເລກທີ 563/ກກປຂ, ລົງວັນທີ 29/12/2022 ຈຳນວນ 45 ຕົບ, ບໍລິມາດ 7,297 ມ3, ສະໜາມ II ກອງກວດກາປ່າໄມ້ແຂວງ.
- ➢ ບັນຊີເລກທີ 149/ກກປຂ, ລົງວັນທີ 29/05/2022 ຈຳນວນ 20 ຕົບ, ບໍລິມາດ 2,513 ມ3, ສະໜາມ II ກອງກວດກາປ່າໄມ້ແຂວງ.
- ➢ ບັນຊີເລກທີ 1026/ຫກປມ, ລົງວັນທີ 7/11/2022 ຈຳນວນ 17 ຕົບ, ບໍລິມາດ 2,230 ມ3, ສະໜາມ II ຫ້ອງການກະສິກາ ແລະ ປ່າໄມ້ເມືອງໄຊເສດຖາ.
- ➢ ບັນຊີເລກທີ 344/ຫກປມ, ລົງວັນທີ 31/03/2022 ຈຳນວນ 16 ຕົບ, ບໍລິມາດ 3,381 ມ3, ສະໜາມ II ຫ້ອງການກະສິກາ ແລະ ປ່າໄມ້ເມືອງໄຊເສດຖາ.
- ➢ ບັນຊີເລກທີ 345/ຫກປມ, ລົງວັນທີ 31/03/2022 ຈຳນວນ 11 ຕົບ, ບໍລິມາດ 2,766 ມ3, ສະໜາມ II ຫ້ອງການກະສິກາ ແລະ ປ່າໄມ້ເມືອງໄຊເສດຖາ.
- ➢ ບັນຊີເລກທີ 346/ຫກປມ, ລົງວັນທີ 31/03/2022 ຈຳນວນ 11 ຕົບ, ບໍລິມາດ 3,742 ມ3, ສະໜາມ II ຫ້ອງການກະສິກາ ແລະ ປ່າໄມ້ເມືອງໄຊເສດຖາ.
- ➢ ບັນຊີເລກທີ 182/ຫກປມ, ລົງວັນທີ 5/12/2022 ຈຳນວນ 6 ຕົບ, ບໍລິມາດ 8,034 ມ3, ສະໜາມ II ຫ້ອງການກະສິກາ ແລະ ປ່າໄມ້ເມືອງສະໜາມໄຊ.



Scanned with CamScanner

- ບັນຊີເລກທີ 149/ຫກປມ, ລົງວັນທີ 07/03/2023 ຈຳນວນ 56 ຕົບ, ບໍລິມາດ 6,931 ມ3, ສະໜາມ II ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູວົງ.
- ບັນຊີເລກທີ 150/ຫກປມ, ລົງວັນທີ 07/03/2023 ຈຳນວນ 423 ຕົບ, ບໍລິມາດ 7,624 ມ3, ສະໜາມ II ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູວົງ.
- ບັນຊີເລກທີ 220/ຫກປມ, ລົງວັນທີ 24/03/2023 ຈຳນວນ 81 ຕົບ, ບໍລິມາດ 12,551 ມ3, ສະໜາມ II ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູວົງ.
- ບັນຊີເລກທີ 16/ຫກປມ, ລົງວັນທີ 03/01/2023 ຈຳນວນ 139 ຕົບ, ບໍລິມາດ 11,995 ມ3, ສະໜາມ II ຫ້ອງການກະສິກຳ ແລະ ປ່າໄມ້ເມືອງພູວົງ.

ລາຍລະອຽດແຕ່ລະຊະນິດໄມ້ ມີດັ່ງລຸ່ມນີ້ :

- ໄມ້ດູ່ ກິໂລ ຈຳນວນ 423 ຕົບ/ໂຕ, ບໍລິມາດ 7,624 ແມັດກ້ອນ
- ໄມ້ຈຳປາປ່າ ຈຳນວນ 235 ຕົບ, ບໍລິມາດ 36,122 ແມັດກ້ອນ
- ໄມ້ແຕ້ຮ໌ ຈຳນວນ 129 ຕົບ, ບໍລິມາດ 11,381 ແມັດກ້ອນ
- ໄມ້ເປືອຍ ຈຳນວນ 18 ຕົບ, ບໍລິມາດ 4,329 ແມັດກ້ອນ
- ໄມ້ເຊືອກ ຈຳນວນ 20 ຕົບ, ບໍລິມາດ 2,513 ແມັດກ້ອນ
- ໄມ້ແຄນຂະຍອມ ຈຳນວນ 35 ຕົບ, ບໍລິມາດ 7,095 ແມັດກ້ອນ

## II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງເປັນຜະລິດຕະພັນໄມ້ສຳເລັດຮູບ ແລະ ເຄິ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.
2. ຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງບໍລິສັດ/ໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.
3. ຕ້ອງເປັນບໍລິສັດ/ໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.
4. ຕ້ອງແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ ທີ່ບໍ່ມີປະຫວັດອັນບໍ່ດີໃນການປະມູນ ຫຼື ຢູ່ໃນໄລຍະດຳເນີນຄະດີໃດໜຶ່ງ ແລະ ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ.
5. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ ພາຍໃນກຳນົດ 05 ວັນລັດຖະການ ພາຍຫຼັງມີບົດບັນທຶກເປີດຊອງປະມູນ.
6. ບໍລິສັດ/ໂຮງງານ ທີ່ສົນໃຈຊື້ຊອງປະມູນ ຕ້ອງໄດ້ປະກອບເອກະສານໃຫ້ຄົບຖ້ວນ ເພື່ອມາຍື່ນຊື້ຊອງປະມູນ ເປັນຕົ້ນແມ່ນ : ໃບທະບຽນວິສາຫະກິດ, ໃບທະບຽນອາກອນ, ໃບອະນຸຍາດດຳເນີນກິດຈະການໂຮງງານ, ໃບຢັ້ງຢືນຖານະການເງິນ. ຖ້າເອກະສານດັ່ງກ່າວນີ້ບໍ່ຄົບຖ້ວນແມ່ນຈະບໍ່ໄດ້ຂາຍຊອງປະມູນໃຫ້.

## III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ພະແນກອຸດສາຫະກຳ ແລະ ການຄ້າ ແຂວງອັດຕະປື ( ຂະແໜງການຄ້າຕ່າງປະເທດ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ **10** ວັນລັດຖະການ ( ນັບແຕ່ວັນທີ **22/06/2023** ຫາ **05/07/2023** ). ລາຄາຊອງປະມູນ: 1.000.000 ກີບ/ຊອງ(ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ **06/07/2023.**
- ສະຖານທີ່ : **ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.**



Scanned with CamScanner

- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າ ຂອງວັນທີ **06/07/2023**, ຈຶ່ງໃຫ້ມາ ມອບສົ່ງ ນໍາຄະນະກໍາມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : **ພະແນກອຸດສາຫະກໍາ ແລະການຄ້າ ແຂວງອັດຕະປື**, ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກໍານົດເວລາ ຂ້າງເທິງດ້ວຍ.

**ຮອງຫົວໜ້າຄະນະກໍາມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ**
**ຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ**

ຕິດຕໍ່ພົວພັນ :

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 55534456

ພະແນກ ອຸດສາຫະກໍາ ແລະ ການຄ້າ ແຂວງອັດຕະປື

ສັນຕິໄຊ ສີລືໄຊ
Santisay SILEUSAY



Scanned with CamScanner